# ພົນລະວັດພິທີກຳ ແລະ ຄວາມເຊື່ອ: ຂະບວນການສ້າງຄວາມໝາຍໃໝ່ທາງວັດທະນະທຳຂອງຊຸມຊົນ ປາກນ້ຳ ໄຊຍະບູລີ, ເຂດໄຊຍະບູລີ, ເມືອງທ່າອຸເທນ, ແຂວງ ນະຄອນພະນົມ.

ສະສິທອນ ອ່ອນເຫຼົາ[1]
Sasithorn Onlao

## ບົດຄັດຫຍໍ້

ບົດຄວາມນີ້ມີຈຸດປະສົງ ເພື່ອສຶກສາຂະບວນການສ້າງຄວາມໝາຍໃໝ່ ທາງວັດທະນະທຳຜ່ານຂັ້ນຕອນພິທີກຳ ແລະ ຄວາມເຊື່ອໃນຊຸມຊົນ ເຂດໄຊຍະບູລີ, ເມືອງ ທ່າອຸເທນ, ແຂວງ ນະຄອນພະນົມ (ປະເທດໄທ); ຜົນການສຶກສາເຫັນວ່າ: ພົນລະວັດພິທີກຳ ແລະ ຄວາມເຊື່ອໃນຊຸມຊົນ, ການເຄື່ອນຍ້າຍຜູ້ຄົນ, ພັດທະນາການ ແລະ ການປ່ຽນແປງຂອງຊຸມຊົນທີ່ມີຄວາມກ່ຽວຂ້ອງກັບເຫດການສຳຄັນທາງປະຫວັດສາດຂອງຊາດ ແລະ ປະຫວັດຂອງທ້ອງຖິ່ນ, ອຳນາດລັດ ແລະ ນະໂຍບາຍຂອງທ້ອງຖິ່ນທີ່ປະຕິບັດຕໍ່ຊຸມຊົນ ເມື່ອເກີດກັບການປ່ຽນແປງ ຄົນໃນຊຸມຊົນຈຶ່ງມີການປັບຕົວ, ຕໍ່ສູ້, ຍາດແຍ່ງຄວາມໝາຍ ແລະ ການດຳລົງຊີວິດ ດ້ວຍການຜະຫຼິດຄວາມໝາຍໃໝ່ທາງວັດທະນະທຳຜ່ານຂັ້ນຕອນການປະຕິບັດທີ່ຫຼາກຫຼາຍທາງວັດທະນະທຳ ພາຍໃຕ້ເງື່ອນໄຂການຕໍ່ຕ້ານ ການປ່ຽນແປງຄວາມສຳພັນກັນໃນຮູບແບບອຳນາດ ການໃຊ້ພື້ນທີ່ພິທີກຳ ເພື່ອຍາດແຍ່ງຊັບພະຍາກອນຂອງຄົນໃນຊຸມຊົນ ແລະ ໃຊ້ເປັນຂໍ້ອ້າງໃຫ້ກັບນະໂຍບາຍຂອງລັດທີ່ເຂົ້າມາຈັດການຊຸມຊົນ ເພື່ອພັດທະນາໃຫ້ເປັນແຫຼ່ງທ່ອງທ່ຽວ ເຊິ່ງເຮັດໃຫ້ຊາວບ້ານຂາດສິດທິໃນຊັບພະຍາກອນທີ່ເປັນພື້ນທີ່ສາທາລະນະ.

ຄຳສຳຄັນ: ພົນລະວັດພິທີກຳ ແລະ ຄວາມເຊື່ອ, ຂະບວນການສ້າງຄວາມໝາຍໃໝ່ທາງວັດທະນະທຳ.

## Abstract

This article aims to study building process of new cultural meaning through ritual and belief dynamics in Chi Buri Tributary Communities, Chai Buri subdistric, Tha Uthen, Nakhon Phanom. The study shows that Ritual and belief dynamics, people's moves, and evolutions and community's modifications are related to the local's and the nation's significance incidents, central government and local policies that affected community. Facing changes, people living in community have to adapt, withstand, negotiate, and compete the meaning and the existence by reproducing new cultural meaning through various cultural operations under terms of reluctance and changing of power relations. Using ritual area to scramble resources from community and negotiating with government policies that interfere community in developing community to be tourist attraction make people lack resources in public area.

Keywords: Ritual and belief dynamics, Process of New Cultural Meaning

---

[1] Lecturer, Department of Thai, Faculty of Humanities and Social Sciences, Rajabhat Mahasarakham University.

## ບົດນຳ

ຊຸມຊົນບ້ານປາກນ້ຳໄຊຍະບູລີ, ເຂດໄຊຍະບູລີ, ເມືອງທ່າອຸເທນ, ແຂວງນະຄອນພະນົມ ເປັນສັງຄົມກະເສດທີ່ມີພື້ນຖານຄວາມເຊື່ອເລື່ອງຜີສາງ ແລະ ອຳນາດສັກສິດເໜືອທຳມະຊາດ ປາກົດຜ່ານພິທີກຳ ແລະ ມີບົດບາດສຳຄັນໃນການປະຕິບັດຂອງຄົນໃນຊຸມຊົນ ມີການເຄື່ອນໄຫວ, ປັບປ່ຽນ, ລຸດຜ່ອນ, ປະສົມປະສານກັບວັດທະນະທຳພາຍນອກທີ່ເຂົ້າມາປະຕິສຳພັນ ເຮັດໃຫ້ເກີດການປ່ຽນແປງທາງຄວາມຄິດ ຈຶ່ງສົ່ງຜົນຕໍ່ການປະຕິບັດພິທີກຳ ແລະ ຄວາມເຊື່ອ ເຖິງຢ່າງໃດກໍ່ຕາມ ການພັດທະນາປະເທດໄປສູ່ຄວາມທັນສະໄໝເຮັດໃຫ້ວິຖີການຜະລິດຂອງຊຸມຊົນຕະຫຼອດເຖິງການບໍລິໂພກມີການມີການປ່ຽນແປງ, ສົ່ງຜົນຕໍ່ການປັບປ່ຽນປະເພນີ ພິທີກຳ ແລະ ຄວາມເຊື່ອອາດຈະສູນເສຍໄປບາງສ່ວນ ຫຼື ມີການປະສົມປະສານກັບວັດທະນະທຳພາຍນອກຈົນມີການສ້າງຄວາມໝາຍໃໝ່ ເພື່ອໃຫ້ສອດຂ້ອງກັບການປ່ຽນແປງຂອງສັງຄົມ ເຊິ່ງເປັນຈຸດທີ່ສ້າງຄວາມສົນໃຈວ່າຂະບວນການຂອງປະກົດການເຫຼົ່ານັ້ນເກີດຂຶ້ນ, ຕໍ່ເນື່ອງ, ສິ້ນສຸດລົງແບບໃດ ພາຍໃຕ້ບໍລິບົດຂອງສັງຄົມ ແລະ ປະຫວັດສາດທີ່ມີການປ່ຽນແປງ **ອານັນ ການຈະນະພັນ 2555:193** ໄດ້ກ່າວໄວ້ວ່າ: *"ເຖິງຄົນໄທຈະມີເສດຖະກິດທີ່ຮຸ່ງເຮືອງປານໃດ ໃນການເຂົ້າສູ່ກະແສສາກົນການແບ່ງແຍກຊົນຊັ້ນນັ້ນກໍ່ຍັງມີໃຫ້ເຫັນຢູ່ທົ່ວໄປໃນຫຼາຍຂົງເຂດ ໂດຍສະເພາະແມ່ນຊຸມຊົນຊົນນະບົດທີ່ຕ້ອງພົບກັບຜົນກະທົບຈາກຂະບວນການດັ່ງກ່າວເຮັດໃຫ້ກາຍເປັນຄົນທີ່ສັງຄົມປ່ອຍຖິ້ມ ຊຸມຊົນເຫຼົ່ານີ້ຈຶ່ງຖືກຕັດສິດໃນການຄວບຄຸມຊັບພະຍາກອນຂອງຕົນເອງເພີ່ມຫຼາຍຂຶ້ນ ເຊັ່ນ: ທີ່ດິນ, ນ້ຳ, ແລະ ປ່າໄມ້ ຜົນລັບທີ່ໄດ້ຮັບກໍ່ຄື ການຍາດແຍ່ງເອົາຊັບພະຍາກອນຢ່າງຮຸນແຮງລະຫວ່າງລັດ, ກຸ່ມນັກທຸລະກິດ ແລະ ປະຊາຊົນໃນຊົນນະບົດ ເຊິ່ງຊັບພະຍາກອນເຫຼົ່ານັ້ນຖືກຈັດການໃຫ້ເປັນໄປຕາມຄວາມພໍໃຈຂອງຕະຫຼາດໂລກທັງໝົດ ໃນຂະນະດຽວກັນຊາວບ້ານໃນຊົນນະບົດຍັງຖືກກົດດັນຢ່າງໜັກໜ່ວງ ໃນລັດທິການຄ້າ ແລະ ບໍລິໂພກນິຍົມ ດ້ວຍການເຂົ້າຮ່ວມໃນກະແສເສດຖະກິດ ແລະ ສື່ລະດັບໂລກ ໃນຮູບແບບດຽວກັບສັງຄົມໃນເມືອງ ນອກນັ້ນປະຊາຊົນໃນຊົນນະບົດຍັງຖືກຂັດຂວາງຈາກການມີສ່ວນຮ່ວມທາງການເມືອງ ແລະ ການກຳນົດຊີວິດຂອງຕົນຢ່າງຮຸນແຮງຂຶ້ນເລື້ອຍໆ"* ເມື່ອຄົນໃນສັງຄົມຊົນນະບົດຖືກກົດກັ່ນໃຫ້ເປັນຄົນອື່ນໃນບໍລິບົດຂອງສັງຄົມທີ່ມີຫຼາຍລະດັບ ຂະບວນການສ້າງຄວາມໝາຍທາງວັດທະນະທຳຂອງຊຸມທີ່ເປັນສັນຍະລັກທີ່ຜູ້ຄົນຂະຫຍາຍໂຕຂຶ້ນຕະຫຼອດເວລາ ບໍ່ມີການຢຸດຢັ້ງ ແລະ ຕາຍໂຕ ໄດ້ປັບປ່ຽນໃນລະຫວ່າງທີ່ມີຄວາມປ່ຽນແປງທີ່ເກີດຂຶ້ນ, ຜົນຜະລິດທີ່ເກີດຂຶ້ນດັ່ງກ່າວນັ້ນ ເປັນຄວາມໝາຍທາງວັດທະນະທຳ ເຊິ່ງເປັນຜົນຜະລິດທາງສັງຄົມທີ່ໝາຍເຖິງພຶດຕິກຳຂອງມະນຸດນັ້ນເອງ ຂະນະດຽວກັນກໍ່ເປັນສັນຍະລັກທີ່ຄົນ

ໄດ້ກໍ່ສ້າງຂຶ້ນຕະຫຼອດເວລາຢ່າງບໍ່ຢຸດນິ່ງ ແລະ ຕາຍໂຕ ເຊິ່ງເປັນຄວາມພະຍາຍາມທີ່ຈະສ້າງຄວາມໝາຍຂອງຊີວິດໃນລະຫວ່າງການຕໍ່ສູ້ກັບຄວາມຂັດແຍ້ງໃນບໍລິບົດຂອງສັງຄົມໜຶ່ງໆ. ຂະບວນການສ້າງຄວາມໝາຍທາງວັດທະນະທຳຈຶ່ງມີຄວາມສຳຄັນ ອະຄິນ ລະພີພັດ (2551:79) ໄດ້ອະທິບາຍຄວາມໝາຍຂອງວັດທະນະທຳໃນບົດຂອງ ຄຣິຟຟອດ ກຽສ ວ່າ: *“ມະນຸດກຳລັງພະຍາຍາມສ້າງຄວາມໝາຍຂອງຊີວິດ ກຳລັງກໍ່ສ້າງບໍ່ວ່າຈະເປັນລັກສະນະໃດກໍ່ຕາມ ກໍ່ຍັງເປັນຂໍ້ສົງໄສທີ່ໃຊ້ໄດ້ຢູ່ ເຊິ່ງມັນສະແດງໃຫ້ເຫັນຢູ່ໃນບົດຄວາມຂອງນັກມະນຸດວິທະຍາ ທີ່ສຶກສາກ່ຽວກັບຄົນທີ່ຖືກສັງຄົມປະປ່ອຍ ທີ່ຕໍ່ສູ້ກັບຄວາມໂຫດຮ້າຍຮຸນແຮງ ໃນສະພາບດັ່ງກ່າວຂະບວນການສ້າງຄວາມໝາຍຈຶ່ງມີຄວາມສຳຄັນຢ່າງຫຼວງຫຼາຍ ຫາກປາສະຈາກຂະບວນການນີ້ກໍ່ຈະມີແຕ່ຄວາມຄຽດແຄ້ນ, ການແບ່ງແຍກ ແລະ ອາລົມຮຸນແຮງ”* ການຍາດແຍ່ງພື້ນທີ່ຈຶ່ງປາກົດໃຫ້ເຫັນໃນຫຼາຍລະດັບ ກ່ຽວພັນໄປເຖິງປະເພນີອັນເກົ່າແກ່ກັບຄວາມຮູ້ໃໝ່ ເຮັດໃຫ້ມີຜົນກະທົບຕໍ່ການປະຕິບັດທັງໃນລະດັບຊຸມຊົນ ແລະ ລະດັບບຸກຄົນ ໂດຍປາກົດຜ່ານຂະບວນການ ແລະ ສັນຍະລັກໃນການປະກອບພິທີກຳ ຊຶ່ງຊຸມຊົນປາກນ້ຳໄຊຍະບູລີ ສາມາດໃຊ້ກົນໄກທາງວັດທະນະທຳເກົ່າແກ່ເປັນເຄື່ອງມືໃນການຕອບສະໜອງຄວາມຕ້ອງການ ແລະ ການດຳລົງຢູ່ຂອງຊຸມຊົນ ໂດຍການປັບປຸງ, ປ່ຽນແປງ ແລະ ສ້າງຄວາມໝາຍໃໝ່ໃຫ້ແກ່ວັດທະນະທຳ ເພື່ອໃຫ້ມີຄວາມສອດຄ້ອງກັບບໍລິບົດຂອງສັງຄົມປະຈຸບັນ.



*ບໍລິເວນວັດໄຕ ຊຶ່ງຕັ້ງຢູ່ໃກ້ປາກແມ່ນ້ຳສົງຄາມ ເປັນທີ່ຕັ້ງຂອງຫໍເຈົ້າພໍ່ເສນ ເຈົ້າເມືອງໄຊຍະບູລີ, ຫໍຍາພໍ່ເຖົ້າແລະບໍລິວານ, ເຈົ້າພໍ່ໂຕ່ງ ແລະ ຫໍບັນພະບູລຸດຄົນຈີນ.*

## ວິທີການດຳເນີນການວິໄຈ

1. ການວິໄຈເອກະສານ

1.1 ໄດ້ລວບລວມເອກະສານການສຶກສາທີ່ກ່ຽວຂ້ອງກັບຄວາມເຊື່ອອຳນາດທາງສິນທຳ, ປະວັດສາດຊຸມ-ຊົນ, ເອກະສານຈົດໝາຍເຫດ ຕະຫຼອດຈົນບົດວິໄຈຊາຍແດນ

1.2 ວິເຄາະ ແລະ ປະເມີນຂໍ້ມູນເອກະສານທີ່ໄດ້ລວບລວມຈາກຂໍ້ 1.1.

2. ການວິໄຈພາກສະໜາມ

2.1 ການສຳຫຼວດພື້ນທີ່ໃນຊຸມຊົນໃນເຂດໄຊຍະບູລີ ເມືອງ ທ່າອຸເທນ, ແຂວງ ນະຄອນພະນົມ

2.2 ການສຳພາດແບບມີໂຄງສ້າງ ແລະ ບໍ່ມີໂຄງສ້າງ;

2.3 ການສັງເກດແບບມີສ່ວນຮ່ວມ ແລະ ບໍ່ມີສ່ວນຮ່ວມໃນພິທີກຳ.

## ຂອບເຂດການວິໄຈ

ການສຶກສາໃນຄັ້ງນີ້ ໄດ້ເກັບກຳຂໍ້ມູນໃນຊຸມຊົນຊາຍແດນປາກນ້ຳໃນເຂດໄຊຍະບູລີ ເມືອງ ທ່າອຸເທນ, ແຂວງ ນະຄອນພະນົມ ຊຶ່ງປະກອບດ້ວຍພື້ນທີ່ທາງກາຍະພາບ ເຊັ່ນ: ພູມສັນຖານປະເທດ, ແຜນທີ່ຂອງຊຸມຊົນ ແລະ ພື້ນທີ່ທາງສັງຄົມ ໄດ້ແກ່: ຄວາມເຊື່ອ, ພິທີກຳ, ປະເພນີ ຕະຫຼອດຈົນພື້ນທີ່ທາງເສດຖະກິດຂອງຊຸມຊົນ.

## ຂອບເຂດທິດສະດີ

ການສຶກສາຄັ້ງນີ້ ຜູ້ວິໄຈໄດ້ນຳໃຊ້ແນວຄິດຫຼັກໃນການອະທິບາຍປະກົດການ ແລະ ສ້າງຄວາມເຂົ້າໃຈຂະບວນການຂອງອຳນາດທາງສິນທຳຜ່ານການນັບຖືຜີ ແລະ ປະຕິບັດການຜະຫຼິດການສ້າງຄວາມໝາຍໃໝ່ ຜ່ານການປ່ຽນແປງພິທີກຳ ແລະ ຄວາມເຊື່ອໃນເຂດໄຊຍະບູລີ ເມືອງ ທ່າອຸເທນ, ແຂວງ ນະຄອນພະນົມ ໂດຍໃຊ້ແນວຄິດຫຼັກເລື່ອງພື້ນທີ່ (Place / Space) ຂອງ ອັງລີ ເລີແຟບ ຈາກ: The Production of Space ຂອງ Henri Lefebvre (1991) Lefebvre ເຊິ່ງກ່ຽວກັບມະໂນພາບຂອງການຜະລິດ ແລະ ຂະບວນການສ້າງພື້ນທີ່ທາງສັງຄົມ "(Social) Space is a (Social) Product." ໄດ້ເວົ້າວ່າ: ພື້ນທີ່ທາງສັງຄົມເປັນຜົນຜະລິດຂອງສັງຄົມ (Lefebvre. 1991 : 26-27) ເຊິ່ງມັນກ່ຽວຂ້ອງກັບຄວາມຄິດຂອງ ສີສັກ ວັນລິໂພດົມ.(2544 : 220-224) ການສ້າງພື້ນທີ່ສາທາລະນະໃຫ້ເປັນພື້ນທີ່ສັກສິດ.

ນອກຈາກນັ້ນ ຜູ້ວິໄຈຍັງໄດ້ນຳໃຊ້ແນວຄິດກ່ຽວກັບການຜະຫຼິດໃໝ່ ທາງວັດທະນະທຳທີ່ເປັນຂອງກຸ່ມແນວຄິດຂອງນີໂອມາກຊິສ ໂດຍສາສະດາຈານ ດຣ. ອານັນ ການຈະນະພັນ (2555:20) ໄດ້ກ່າວໄວ້ວ່າ "*ການຜະຫຼິດໃໝ່ທາງວັດທະນະທຳຊຶ່ງເປັນສ່ວນໜຶ່ງຂອງສຳນັກຄິດນີໂອມາກ-ຊິສ ການຜະຫຼິດໃໝ່ທາງວັດທະນະທຳນີ້ໝາຍເຖິງຄວາມພະຍາຍາມນິຍາມຄວາມໝາຍໃໝ່ຂອງວັດທະນະທຳ ເພື່ອການປັບໂຕ ຫຼື ຕໍ່ສູ້ກັບບໍລິບົດທາງສັງຄົມທີ່ມີການປ່ຽນແປງ*" ຜູ້ວິໄຈໄດ້ນຳເອົາແນວຄິດດັ່ງກ່າວມາອະທິບາຍປະກົດການພິທີກຳທີ່ຄົນໃນຊຸມຊົນປະຕິບັດຢ່າງເປັນຮູບປະທຳທີ່ເກີດຈາກຄວາມເຊື່ອທີ່ເປັນພາສາຂອງອຳນາດຂອງອຸດົມການພາຍໃຕ້ບໍລິບົດທາງສັງຄົມ ແລະ ປະຫວັດສາດທີ່ມີການປ່ຽນແປງຂອງຊຸມຊົນ.

## ຊຸມຊົນປາກນ້ຳ ໄຊຍະບູລີ ກັບການປະກອບຄວາມໝາຍໃໝ່ທາງວັດທະນະທຳ

ຊຸມຊົນຊາຍແດນປາກນ້ຳໃນເຂດໄຊຍະບູລີ ເມືອງ ທ່າອຸເທນ, ແຂວງ ນະຄອນພະນົມ ໃນບໍລິເວນລ່ອງແມ່ນ້ຳສົງຄາມຕອນລຸ່ມ ເປັນສ່ວນໜຶ່ງຂອງແອ່ງສະກົນນະຄອນ ມີພັດທະນາການຊຸມຊົນແຕ່ກ່ອນປະຫວັດສາດ ເລີ່ມຈາກລ່ອງແມ່ນ້ຳສົງຄາມຕອນເທິງ ແລະ ຕະຫຼອດລ່ອງແມ່ນ້ຳສົງຄາມຕອນລຸ່ມ ໂດຍ ສາສະດາຈານ ສີສັກ ວັນລິໂພດົມ (2540:6) ໄດ້ອະທິບາຍວ່າ "*ໃນແອ່ງນ້ຳສະກົນນະຄອນ ນັ້ນຊຸມຊົນບູຮານໃນສະໄໝກ່ອນປະຫວັດສາດ ແລະ*

*ຍຸກຕົ້ນປະຫວັດສາດສ່ວນໃຫຍ່ແມ່ນກະຈາຍຢູ່ຕາມທົ່ງພຽງລ່ອງຕາມແຄມແມ່ນ້ຳ ເຊັ່ນ: ບໍລິເວນລ່ອງແມ່ນ້ຳສົງຄາມຕອນເທິງ ຫຼາຍກວ່າດ້ານລຸ່ມແມ່ນ້ຳທີ່ນ້ຳຖ້ວມເຖິງ ທັງນີ້ກໍ່ຍ້ອນວ່າບໍລິເວນດັ່ງກ່າວ ໃນລະດູທີ່ນ້ຳຖ້ວມສູງເຮັດໃຫ້ປະຊາຊົນບໍ່ສາມາດອາໄສຢູ່ຖາວອນໄດ້ ລວມໄປເຖິງຜົນລະປູກກໍ່ບໍ່ໄດ້ຮັບໝາກຜົນ ຜູ່ທີ່ດຳລົງຊີວິດຢູ່ບໍລິເວນນີ້ກໍ່ຍັງມີການຍົກຍ້າຍຖິ່ນຖານໄປຕາມລະດູການ ຫຼື ກໍ່ເປັນພຽງຊຸມຊົນໜ້ອຍໆທີ່ພົບເຫັນໃນສະໄໝ 200-400 ປີຜ່ານມາ"*
ສືບຕໍ່ຈາກຫຼັກຖານບູຮານຄະດີ ແລະ ຫຼັກຖານທາງປະຫວັດສາດ ທີ່ປະກົດເຫັນຊຸມຊົນທາງຕອນເທິງຂອງນ້ຳສົງຄາມ ແລ້ວຍັງປະກົດເຫັນຊຸມຊົນບໍລິເວນນ້ຳສົງຄາມຕອນລຸ່ມ ເຊິ່ງມີພັດທະນາການຊຸມຊົນເມືອງທີ່ພົບພໍ້ບູຮານສະຖານຫຼາຍແຫ່ງທີ່ເປັນຫຼັກຖານສຳຄັນ ໄດ້ແກ່: ວັດສີສຸມັນທາມະຫາອາຣາມ (ວັດໃຕ້), ວັດມະຫາອຸຕະມະນັນທະອາຣາມ (ວັດກາງ), ວັດສີບຸນເຮືອງ (ວັດເໜືອ), ວັດຍອດແກ້ວ ມີວັດທັງໝົດ 7 ແຫ່ງ ແລະ ມີວັດຮ້າງທັງໝົດ 4 ແຫ່ງ ໄດ້ແກ່: ວັດສຣີສຸມັນທາມະຫາອາຣາມ (ວັດໃຕ້), ວັດມະຫາອຸຕມະນັນທະອາຣາມ (ວັດກາງ), ວັດສີບຸນເຮືອງ (ວັດເໜືອ), ວັດຍອດແກ້ວ ແລະ ວັດ 3 ແຫ່ງທີ່ຍັງມີພະສົງ ໄດ້ແກ່: ວັດໂພໄຊ, ວັດໄຕພູມ(ໃໝ່) ແລະ ວັດປ່ານິເວດ ນອກຈາກຄວາມເຊື່ອທາງພຣະພຸດທະສາສໜາແລ້ວ ຊຸມຊົນບ້ານປາກນ້ຳໄຊຍະບູລີ ຍັງມີພື້ນຖານຄວາມເຊື່ອເລື່ອງການນັບຖືຜີ ແລະ ສິ່ງສັກສິດ ໂດຍການນັບຖືຜີປູ່ຍ່າຕານາຍ ແລະ ການນັບຖືຜີເຈົ້າພໍ່ທີ່ຍັງປາກົດໃຫ້ເຫັນເຊິ່ງເປັນກົນໄກສຳຄັນໃນການຄວບຄຸມຄວາມສຳພັນທາງສັງຄົມຈົນເຖິງປະຈຸບັນ

ການນັບຖືຜີຂອງຊຸມຊົນບ້ານປາກນ້ຳໄຊຍະບູລີທີ່ປະກົດເຫັນ ປະກອບດ້ວຍ ຫໍບັນພະບູລຸດຄົນຈີນ ແລະ ຫໍຍາພໍ່ ເຊິ່ງຕັ້ງຢູ່ບໍລິເວນວັດສີສຸມັນທາມະຫາອາຣາມ ຫຼື ວັດໄຕພູມ ວັດຮ້າງທີ່ຕັ້ງຢູ່ປາກນ້ຳສົງຄາມທັງໝົດມີ 4 ແຫ່ງ ໄດ້ແກ່:
1. ຫໍເຈົ້າ ເປັນຫໍບັນພະບູລຸດຄົນຈີນໂພ້ນທະເລ ທີ່ມາຄ້າຂາຍຢູ່ເຂດປາກນ້ຳໄຊຍະ-ບູລີ; 2. ຫໍຍາພໍ່ໂຕ່ງ ເປັນເຈົ້າແຫ່ງລ່ອງນ້ຳຂອງ; 3. ຫໍຍາພໍ່ເຖົ່າ ກັບຂ້າທາດບໍລິວານເປັນຫໍປູ່ຕາ ແລະ 4. ຫໍຍາພໍ່ເສນເຈົ້າເມືອງໄຊຍະບູລີ ຊຶ່ງແຕ່ລະຫໍຈະມີເລື່ອງເລົ່າທີ່ພົວພັນກັບຊຸມຊົນແລະປະຫວັດຂອງຊຸມຊົນ, ແຕ່ລະຫໍຈະມີກຳນົດໝາຍງານ ປະຈຳປີ ມີຂະບວນການທີ່ເກາະກ່ຽວກັນຕັ້ງແຕ່ເຈົ້າພໍ່, ຮ່າງຊົງ ຫຼື ນາງທຽມ, ພິທີກຳ ແລະ ຕະຫຼອດຈົນປະເພນີຂອງທ້ອງຖິ່ນ ຄື: ຫໍເຈົ້າທີ່ເປັນຫໍຜີປູ່ຍ່າຕານາຍຈະມີການລ້ຽງຫໍໃນຊ່ວງກຸດຈີນ ແລະ ບໍ່ມີພິທີເຂົ້າຊົງ, ສ່ວນຫໍ່ເຈົ້າພໍ່ທັງ 3 ໄດ້ກຳນົດງານປະຈຳປີຮ່ວມກັນປີລະ 3 ເທື່ອ ແລະ ຈະມີເຈົ້າເຂົ້າຊົງນາງທຽມໃນງານປະຈຳປີ ຄື: ເດືອນ 3 ແລະ ເດືອນ 6ກ່ອນບຸນບັ້ງໄຟ (ອອກໃໝ່ 6ຄ່ຳ ຫຼື ຂຶ້ນ 6ຄ່ຳ ເດືອນ 6) ແລະ ຊ່ວງບຸນບັ້ງໄຟ ບໍ່ກາຍ 15 ຄ່ຳເດືອນ 6 ພິທີກຳແຕ່ລະເທື່ອຈະມີການເຂົ້າຊົງນາງທຽມ ເພື່ອປຶກສາກ່ຽວກັບຊີວິດໃນແຕ່ລະດ້ານ ເຊັ່ນ: ທຳນາຍຊີວິດໃນອະນາຄົດ, ການໃຫ້ຄວາມຊ່ວຍເຫຼືອໃນການເຂົ້າເຮັດວຽກ, ການຄ້າຂາຍ, ຕະຫຼອດຈົນການປິ່ນປົວພະຍາດ ເປັນຕົ້ນ.

ການສະແດງອອກຂອງເຈົ້າເຂົ້າຊົງ ໂດຍຜ່ານຮ່າງຊົງຂອງນາງທຽມກໍ່ມີຄວາມແຕກຕ່າງຈາກແຕ່ກ່ອນ ຈຶ່ງເກີດການປ່ຽນແປງທີ່ເກີດຈາກການປະຕິສຳພັນລະຫວ່າງປະເພນີດັ້ງເດີມກັບຄວາມຮູ້ອັນໃໝ່ກະທົບຕໍ່ການປະຕິບັດໃນລະດັບຊຸມຊົນ ແລະ ລະດັບບຸກຄົນ ໂດຍສະແດງອອກຜ່ານຂະບວນການ ແລະ ສັນຍະລັກໃນການປະກອບພິທີກຳ ເຊິ່ງຊຸມຊົນດັ່ງກ່າວສາມາດໃຊ້ກົນໄກທາງວັດທະນະທຳເກົ່າເປັນເຄື່ອງມື ໃນການຕອບສະໜອງຄວາມຕ້ອງການ ແລະ ການດຳລົງຊີວິດຂອງຊຸມຊົນ ໂດຍການປັບປຸງ, ປ່ຽນແປງ ແລະ ສ້າງຄວາມໝາຍໃໝ່ໃຫ້ແກ່ວັດທະນະທຳ ເພື່ອໃຫ້ມີຄວາມສອດຂ້ອງກັບບໍລິບົດຂອງສັງຄົມໃນປະຈຸບັນ.



*ແມ່ນ້ຳສົງຄາມໄຫຼລົງສູ່ແມ່ນ້ຳຂອງ ບໍລິເວນປາກແມ່ນ້ຳໄຊຍະບູລີ, ເຂດໄຊຍະບູລີ, ເມືອງທ່າອຸເທນ, ແຂວງ ນະຄອນພະນົມ.*

ຊຸມຊົນປາກແມ່ນ້ຳໄຊຍະບູລີ ທີ່ເປັນພາກສ່ວນໜຶ່ງຂອງລຸ່ມນ້ຳສົງຄາມທີ່ມີພັດທະນາການທາງປະຫວັດສາດ ຢ່າງຕໍ່ເນື່ອງ ແລະ ເປັນພື້ນທີ່ທາງເສດຖະກິດທີ່ເຊື່ອມໂຍງລະຫວ່າງຫຼວງພະບາງກັບເມືອງໃຫຍ່ທີ່ສຳຄັນທາງຕອນລຸ່ມ ຊ່ວງສະຕະວັດທີ 16 ຄສ. 1501-1600 ຫຼື ພສ. 2044-2143 ເຊິ່ງກົງກັບສະໄໝອະຍຸທະຍາຕອນກາງ (ພສ. 1991-2231) ສົ່ງຜົນໃຫ້ຊຸມທີ່ອາໄສຢູ່ລະຫວ່າງວຽງຈັນແລະທາດພະນົມກາຍເປັນເຄືອຂ່າຍທາງເສດຖະກິດ ຊຶ່ງລວມໄປເຖິງຊຸມຊົນບໍລິເວນປາກນ້ຳໄຊຍະບູລີອີກດ້ວຍ ໂດຍສະເພາະພາຍຫຼັງສູນກາງເຄືອຂ່າຍທາງເສດຖະກິດ ໄດ້ເຄື່ອນຍ້າຍຈາກຫຼວງພະບາງມາວຽງຈັນ; ໂຢຊິຢູກິ ມາຊູຮາຣາ (2546:90) ໄດ້ອະທິບາຍວ່າ: *"ເມື່ອມາເຖິງຄຣິສຕະວັດທີ 16 ເຄືອຂ່າຍທາງເສດຖະກິດຂອງອານາຈັກລ້ານຊ້າງໄດ້ຂະຫຍາຍອອກສູ່ທິດຕາເວັນອອກສຽງໃຕ້ເລື້ອຍໆ ຈົນເຖິງທາດພະນົມ ແລະ ສູນກາງຂອງເຄືອຂ່າຍດັ່ງກ່າວກໍ່ຍົກຍ້າຍມາຈາກຫຼວງພະບາງໄປຢູ່ວຽງຈັນ ພາຍຫຼັງຍົກຍ້າຍຣາຊທານີໃນກາງຄຣິສຕະວັດທີ 16 ອານາຈັກດັ່ງກ່າວສາມາດຕິດຕໍ່ກັບພາກພື້ນທີ່ໃກ້ຄຽງໄດ້ສະດວກ ໂດຍມີເມືອງທີ່ສຳຄັນ ຊຶ່ງຕັ້ງຢູ່ເທິງເຄື່ອງຂ່າຍດັ່ງກ່າວ ເປັນຈຸດເລີ່ມຕົ້ນ ຄື: (1) ຫຼວງພະບາງຕິດຕໍ່ກັບຢູນານ ແລະ ລັດຕ່າງໆ ໃນລຸ່ມນ້ຳຂອງຕອນເທິງ, (2) ເມືອງປາກລາຍ ເມືອງຝາກຊ້າຍ ແລະ ເມືອງ ໜອງຫານນ້ອຍຕິດຕໍ່ກັບອານາຈັກອະຍຸທະຍາ ຫຼື ລຸ່ມນ້ຳເຈົ້າພະຍາຕອນລຸ່ມ ໂດຍຜ່ານ ພິດສະນຸໂລກ, ເພັດສະບູນ ແລະ ໂຄຣາຊ ຕາມລຳດັບ, (3) ທາດພະນົມຕິດຕໍ່ກັບກຳປູເຈຍ ຫຼື ລຸ່ມນ້ຳຂອງຕອນລຸ່ມ ພ້ອມກັບພາກກາງຂອງຫວຽດນາມ, ການສ້າງເຄືອຂ່າຍ*

*ທາງເສດຖະກິດຮູບແບບນີ້ ກໍ່ມີປະໂຫຍດຫຼວງຫຼາຍໃນການໝູນວຽນສິນຄ້າພາຍໃນ ແລະ ການຕິດຕໍ່ຄ້າຂາຍລັດໃກ້ຄຽງ ທີ່ເປັນເງື່ອນໄຂອັນສຳຄັນທີ່ສຸດຢ່າງໜຶ່ງ ຊຶ່ງເຮັດໃຫ້ "ຍຸກທອງ" ປາກົດຜົນເປັນຈິງໃນຄຣິສຕະວັດຕໍ່ໄປ"*




*ແຜນທີ່ເຄືອຂ່າຍທາງເສດຖະກິດຂອງອານາຈັກລ້ານຊ້າງໃນຄຣິສຕະວັດທີ 16-17*
*(ໂຢຊິຢູກິ ມາຊູຮາຣາ.2546:92)*

ຈາກແຜນທີ່ *ໂຢຊິຢູກິ ມາຊູຮາຣາ (2546:92)* ສະແດງໃຫ້ເຫັນເຄືອຂ່າຍທາງເສດຖະ ຂອງອານາຈັກລ້ານຊ້າງໃນຄຣິສຕະວັດ ທີ 16-17 ໂດຍຜູ້ວິໄຈໄດ້ສ້າງສັນຍະລັກ.★.. ເພື່ອໃຫ້ເຫັນຕຳແໜ່ງທີ່ຕັ້ງຂອງໄຊຍະບູລີ ຢູ່ລະຫວ່າງໜອງຫານຫຼວງ ແລະ ໜອງຫານນ້ອຍ ຊຶ່ງຢູ່ໃນເສັ້ນທາງຄົມມະນາຄົມຫຼັກພາຍໃນທີ່ຕັ້ງຢູ່ປາກນ້ຳສົງຄາມທີ່ໄຫຼລົງສູ່ນ້ຳຂອງ ຂະນະດຽວກັນກໍ່ຍັງມີໃນພື້ນທີ່ທີ່ເປັນເສັ້ນທາງຕິດຕໍ່ກັບລັດອື່ນ ຈົນກາຍເປັນພາກສ່ວນໜຶ່ງຂອງເຄືອຂ່າຍທາງເສດຖະກິດທີ່ມີການໝູນວຽນສິນຄ້າພາຍໃນລັດກັບລັດໃກ້ຄຽງກັນ.

ຊຸມຊົນລຸ່ມນ້ຳສົງຄາມຕອນລຸ່ມເຖິງປາກນ້ຳສົງຄາມ ມີພັດທະນາການຊຸມຊົນ

ເມືອງທີ່ພົບພົ້ບູຮານສະຖານຫຼາຍແຫ່ງທີ່ເປັນຫຼັກຖານສຳຄັນ, ສາສດາຈານ ສີສັກ ວັນລີໂພດົມ (2556:610-61) ໄດ້ອະທິບາຍລັກສະນະຊຸມຊົນດັ່ງກ່າວດັ່ງນີ້: *ຊຸມຊົນເມືອງທີ່ສຳຄັນໃນແມ່ນ້ຳສົງຄາມຕອນລຸ່ມທີ່ມີລັກຖານທາງປະຫວັດສາດສະໜັບສະໜູນຢ່າງໂດດເດັ່ນ ໄດ້ແກ່: ເມືອງ ໄຊຍະບູລີ ທີ່ຢູ່ບໍລິເວນປາກນ້ຳສົງຄາມ ເມືອງນີ້ສ້າງຕັ້ງຂຶ້ນໂດຍການນຳພາຂອງໄທຍ໌ ທີ່ມາຈາກຫຼວງພະບາງ ຫຼັງຈາກຕັ້ງເມືອງໄດ້ບໍ່ດົນກໍ່ເກີດສົງຄາມລະຫວ່າງກຣຸງເທບກັບວຽງຈັນ ໃນສະໄໝລັດຖະການທີ 3 ຜູ້ຄົນຈຶ່ງອົບພະຍົບໄປຢູ່ຝາກຊ້າຍຂອງແມ່ນ້ຳຂອງ ເຮັດໃຫ້ເກີດເປັນເມືອງຮ້າງ;* ເຂດໄຊຍະບູລີ ເປັນຊຸມຊົນທີ່ຕັ້ງຢູ່ປາກນ້ຳສົງຄາມມີຄົນອົບພະຍົບມາຈາກລຳນ້ຳຂອງ ຕອນປະມານ 100-400 ປີ ເປັນຊ່ວງເວລາທີ່ສຳຄັນ ເພາະວ່າຊວງເວລາທີ່ກຸ່ມຄົນເຄື່ອນຍ້າຍດ້ວຍບັນຫາທາງການເມືອງລະຫວ່າງ ສະຫຍາມ - ວຽງຈັນ ດ້ານທິດຕາເວັນອອກທີ່ຕິດກັບແຄມແມ່ນ້ຳຂອງ, ທາງທິດເໜືອຂອງເມືອງທ່າອຸເທນ ແລະ ທິດຕາເວັນອອກຂອງ ແຂວງນະຄະພະນົມ ມີປະຫວັດການກໍ່ຕັ້ງເມືອງຕາມຫຼັກຖານທາງປະຫວັດສາດ ຕັ້ງແຕ່ລັດຖະການທີ 1 ຈົນເຖິງປະຈຸບັນ; ເຊິ່ງໄດ້ແບ່ງຊ່ວງສະໄໝທາງປະຫວັດສາດອອກເປັນ 3 ຍຸກດັ່ງນີ້:

**ຍຸກທີ 1:** ໃນປີມະໂລງ ພສ. 2351 ກົງກັບຍຸກລັດຕະນະໂກສິນ ຊ່ວງທ້າຍຂອງລັດຖະການທີ 1 ທ້າວ ໝໍ້ ແລະ ເມຍ ພ້ອມດ້ວຍບໍລິວານ ເຊິ່ງເປັນເຜົ່າຍໍ້ໜີເສິກສົງຄາມມາຈາກທົ່ງສາ (ປະຈຸບັນຢູ່ໃນແຂວງໄຊຍະບູລີທາງພາກເໜືອຂອງ ສປປ ລາວ) ໄດ້ອົບພະຍົບມາຕາມລຳແມ່ນ້ຳຂອງ ເຖິງເມືອງວຽງຈັນ ເຈົ້າອານຸວົງຜູ້ຄອງນະຄອນຫຼວງວຽງຈັນໄດ້ໃຫ້ ທ້າວ ໝໍ້ ໄປສ້າງບ້ານເມືອງທີ່ປາກນ້ຳສົງຄາມ ຟາກເບື້ອງຂວາຂອງລຳນ້ຳຂອງ ແລະ ແຕ່ງຕັ້ງໃຫ້ ທ້າວ ໝໍ້ ຂຶ້ນເປັນ ພະຍາທົ່ງສາ ປົກຄອງເມືອງ ໄຊຍະສຸດອຸຕະມະບູລີ ຂຶ້ນກັບນະຄອນວຽງຈັນໂດຍກົງ ໃນສະໄໝນັ້ນນະຄອນວຽງຈັນແມ່ນຂຶ້ນກັບ ກຸງລັດຕະນະໂກສິນ ໂດຍກົງ, ປະເທດສະຫຍາມສະໄໝລັດຖະການທີ 3 ມີກໍລະນີເຈົ້າອະນຸວົງ ເນື່ອງຈາກພະຍາທົ່ງສາ ຖິ້ມເມືອງໄຊຍະສຸດອຸຕະມະບູລີ ໜີໄປອາໄສຢວນ ເມືອງຈຶ່ງຖືກຖິ້ມເປັນເມືອງຮ້າງເປັນເວລາ 1 ປີ.

**ຍຸກທີ 2**: ເຈົ້າພະຍາບໍດິນເດຊາໄດ້ມອບໝາຍໃຫ້ພຣະວິຊິດສົງຄາມ ເປັນແມ່ທັບກອງທີ 1 ຄຸມກຳລັງທະຫານໄປເມືອງອຸບົນ, ເມືອງເຂມມະລາດ, ເມືອງຍະໂສທອນ ຊຶ່ງມີປະຊາກອນທັງໝົດປະມານ 180 ຄົນ ໄປປ້ອງກັນເມືອງໄຊຍະສຸດອຸຕະມະບູລີ ທີ່ປາກນ້ຳສົງຄາມທີ່ຖືກຖິ້ມຮ້າງມາເປັນໄລຍະ 1 ປີລະຫວ່າງປີ ພສ. 2370-2375 ກົງກັບສະໄໝພຣະບາດສົມເດັດພຣະນັ່ງເກົ້າເຈົ້າຢູ່ຫົວ ລັດຖະການທີ 3 (ພສ. 2367 ຫາ ພສ. 2374) ເມື່ອໄດ້ມີການປຸກລະດົມຄອບຄົວຊາວເມືອງຄຳເກີດ ແລະ ເມືອງຄຳມ່ວນ[1] ຂ້າມມາຕັ້ງບ້ານເຮືອນຢູ່ເມືອງໄຊຍະບູລີ ໃຫ້ຫຼາຍຂຶ້ນ, ໃນປີ ພສ. 2381 ຈຶ່ງໄດ້ມີການແຕ່ງຕັ້ງໃຫ້ຣາຊວົງເສນເປັນພຣະໄຊຍະຣາຊວົງສາ ເປັນເຈົ້າເມືອງປົກຄອງເມືອງໄຊຍະບູລີຄົນທຳອິດ.

ພາຍຫຼັງກໍລະນີເຈົ້າອະນຸວົງໃນຊ່ວງ ພສ. 2364-2387 ປະຊາກອນທີ່ຢູ່ຝັ່ງຊ້າຍແມ່ນ້ຳຂອງ ໄດ້ຖືກກວາດຕ້ອນມາຝັ່ງຂວາເປັນຈຳນວນຫຼາຍ ສຸວິດ ທີຣະສາສວັດ (2543:129) ໄດ້ອະທິບາຍກ່ຽວກັບການອົບພະຍົບຂອງປະຊາກອນລາວ ຄັ້ງທີ່ຍິ່ງໃຫຍ່ໃນປະຫວັດສາດລາວວ່າ: *"ລາວທີ່ຢູ່ຝັ່ງຊ້າຍຂອງແມ່ນ້ຳຂອງແມ່ນຖືກຝ່າຍສະຫຍາມກວາດຕ້ອນມາໄວ້ທາງຝາກຂວາ ຄື ພາກອີສານເປັນຈຳນວນຫຼາຍ ແລະລາວທີ່ເຄີຍອາໄສຢູ່ຝັ່ງຂວາບາງເມືອງກໍ່ຖືກກວາດຕ້ອນໄປຢູ່ພາກກາງ, ການກວາດຕ້ອນຝັ່ງຊ້າຍມາຢູ່ຝັ່ງຂວາກໍ່ເພື່ອຕັດກຳລັງຂອງລາວ ທີ່ຈະໃຊ້ຕໍ່ຕ້ານຝ່າຍສະຫຍາມ"* ດັ່ງນັ້ນການກວາດຕ້ອນຄົນລາວມາຢູ່ຝັ່ງຂວາ ຈຶ່ງເປັນການເຄື່ອນຍ້າຍປະຊາກອນຄັ້ງທີ່ຍິ່ງໃຫຍ່ຂອງປະຫວັດສາດລາວ ທີ່ໄດ້ມາສ້າງບ້ານແປງເຮືອນຢູ່ທີ່ອີສານເປັນຈຳນວນຫຼວງຫຼາຍ, ລາວທີ່ຖືກກວາດຕ້ອນມາໄດ້ແກ່: ເມືອງວຽງຈັນ, ເມືອງຄຳເກີດ, ເມືອງຄຳມ່ວນ, ເມືອງພິນ, ເມືອງເຊໂປນ, ເມືອງນອງ, ເມືອງມະຫາໄຊກອງແກ້ວເປັນຕົ້ນ; ສ່ວນປະຊາຊົນລາວທີ່ຢູ່ຝັ່ງຂວາກໍ່ຖືກກວາດຕ້ອນໄປຢູ່ພາກກາງ, ກຸ່ມຊົນຊາດຍໍ້ ກໍ່ໄດ້ກັບມາຢູ່ເມືອງໄຊຍະບູລີ ອີກເທື່ອໜຶ່ງ ເນື່ອງຈາກຢູ່ອີສານມີກຸ່ມຄົນລາວທີ່ມາຈາກຍະໂສທອນ ແລະເມືອງອຸບົນເຂົ້າມາອາໄສຢູ່ແລ້ວ ຈຶ່ງໄດ້ໄປຕັ້ງບ້ານເຮືອນຢູ່ບໍລິເວນ ເມືອງທ່າອຸເທນປະຈຸບັນ, ຕໍ່ມາເຜົ່າຍໍ້ ບາງພາກສ່ວນໄດ້ກັບຄືນມາຕັ້ງຖິ່ນຖານຢູ່ໄຊຍະບູລີຝັ່ງຂວາຂອງປາກນ້ຳສົງຄາມ ກົງກັນຂ້າມກັບເມືອງໄຊຍະບູລີ.

ໃນຊ່ວງສະຫຍາມເຂົ້າມາປົກຄອງລາວ ຊ່ວງຕົ້ນລັດຕະນະໂກສິນນັ້ນ ການຜະລິດທັງຝັ່ງຂວາ ແລະ ຝັ່ງຊ້າຍ ຂອງແມ່ນ້ຳຂອງຍັງເປັນການຜະລິດເພື່ອລ້ຽງຊີບ ຜົນຜະລິດສ່ວນທີ່ເຫຼືອແມ່ນເປັນສິນຄ້າແລກປ່ຽນ ແລະ ເປັນພາສີແກ່ລັດ, ການຄ້າລະຫວ່າງລັດເກີດຂຶ້ນຢູ່ຕາມເມືອງຂະໜາດໃຫຍ່ຕາມແຄມແມ່ນ້ຳຂອງ ຕາມເມືອງຕ່າງໆເຫຼົ່ານີ້ຈະມີພໍ່ຄ້າຫຼາຍກຸ່ມດ້ວຍກັນ; ສຸວິດ ທີຣະສາສວັດ (2541:179) ໄດ້ກ່າວເຖິງການຄ້າບໍລິເວນເມືອງໃຫຍ່ແຄມແມ່ນ້ຳຂອງວ່າ: *"ການຄ້າໃນຊົນນະບົດມີໜ້ອຍ ມີແຕ່ເມືອງໃຫຍ່ໆເທົ່ານັ້ນ ຊຶ່ງສ່ວນຫຼາຍຈະຢູ່ລຽບຕາມແຄມແມ່ນ້ຳຂອງ ທີ່ມີການຄ້າລະຫວ່າງເມືອງ ຫຼື ລະຫວ່າງປະເທດ ເມືອງເຫຼົ່ານີ້ສ່ວນຫຼາຍຈະມີຄົນຈີນມາຄ້າຂາຍ, ບາງເມືອງມີ ກຸລາ, ຕ້ອງສູ້, ຂະເໝັນ, ຍວນ ແລະ ຝຣັ່ງ ເຂົ້າມາຄ້າຂາຍ ເຊັ່ນ: ຫຼວງພະບາງ, ໜອງຄາຍ, ນະຄອນພະນົມ, ມຸກດາຫານ, ຈຳປາສັກ, ສີທັນດອນ ແລະ ຊຽງແຕງ..."* ສ່ວນສິນຄ້າທີ່ສົ່ງອອກແມ່ນຂອງປ່າ, ສິນຄ້ານຳເຂົ້າຈາກຈີນແມ່ນ ຜ້າ, ເຄື່ອງເຫຼັກ. ນົມກະປ໋ອງ ຈາກເອີລົບ ເຊິ່ງຜ່ານເມືອງມະລະແໝ່ງ ປະເທດມຽນມ້າ ຫຼື ຜ່ານທາງກຣຸງເທບ, ສ່ວນຄົນຫວຽດນາມທີ່ມາອາໄສຢູ່ໄຊຍະບູລີ ໃນສະໄໝພຣະບາດສົມເດັດພຣະຈອມເກົ້າເຈົ້າຢູ່ຫົວ ລັດຖະການທີ 4 (ພສ. 2374-2411) ຕໍ່ຈາກຈັກກະພັດ ດີມິນມາງ ໄດ້ກົດຂີ່ຂູດຮີດພວກທີ່ນັບຖືກສາສໜາຄຣິສຈຶ່ງໄດ້ຫຼົບລີ້ໄພ ທາງການສາສໜາ ແລະການເມືອງເຂົ້າມາໃນສະຫຍາມ ທັງພາກກາງ, ພາກຕາເວັນ

ອອກ, ຕະຫຼອດຈີນພາກຕາເວັນອອກສຽງເໜືອ ໂດຍຜ່ານລາວເຂົ້າມາຢູ່ທາງຝັ່ງຊ້າຍ ແລະ ຝັ່ງຂວາຂອງແມ່ນ້ຳຂອງ ເຊັ່ນ: ເມືອງໜອງຄາຍ, ເມືອງນະຄອນພະນົມ, ເມືອງໄຊຍະບູລີ, ເມືອງທ່າອຸເທນ ແລະ ເມືອງສະກົນນະຄອນ ເປັນຕົ້ນ.

ເມື່ອມີການປະຕິຮູບການບໍລິຫານແຜນດິນ ໃນ ພສ. 2433 ລັດຖະການທີ 5 ໄດ້ໃຫ້ການຈັດການບໍລິຫານລາຊະການໃນພາກພື້ນຂຶ້ນໃໝ່ ເນື່ອງຈາກເປັນເຂດທີ່ຫາງໄກ ແລະ ປະກອບກັບອີສານເປັນເຂດທີ່ໃກ້ກັບອິນດູຈີນ ເປັນປະເທດທີ່ຖືກພວກຕາເວັນຕົກຮຸກຮານ; ເຕີມ ວິພາກພົດຈະນະກິດ (2546: 301) ໄດ້ກ່າວເຖິງການປະຕິຮູບການບໍລິຫານລາຊະການແຜ່ນດິນ ໃນ ພສ. 2433 ວ່າ: "*ແຕ່ງຕັ້ງໃຫ້ຈັດລາຊະການບໍລິຫານສ່ວນພາກພື້ນຂຶ້ນໃໝ່ ໂດຍໃຫ້ລວມຫົວເມືອງ ເອກ, ໂທ, ຕີ ແລະ ຈັດຕະວາ ຮວມເຂົ້າກັບແລ້ວແບ່ງອອກເປັນ 4 ກອງໃຫຍ່ ໂດຍໃຫ້ມີຂ້າຫຼວງທຳການປົກຄອງກອງລະ 1 ຄົນ, ແຕ່ໃຫ້ມີຂ້າຫຼວງໃຫຍ່ກຳກັບລັດຖະການຢູ່ຈຳປາສັກ 1 ຄົນ ເອົາໃຈໃສ່ບຳລຸງຮັກສາໃຫ້ໃກ້ຊິດຂຶ້ນ*" ສ່ວນຫົວເມືອງລາວພາກເໜືອໄດ້ລວມ*ຫົວເມືອງ ເອກ, ໂທ, ຕີ ແລະ ຈັດຕະວາ* ເຂົ້າດ້ວຍກັນໃນຂະນະທີ່ເມືອງໄຊຍະບູລີຍັງເປັນເມືອງເອກ ແລະ ຊື່ເກົ່າແມ່ນຊື່ ບ້ານປາກນ້ຳສົງຄາມ, ຕໍ່ມາ ພສ. 2436 ໄດ້ມີ ຣສ. 112 ເມືອງໄຊຍະບູລີ ຊຶ່ງເປັນຈຸດກົງກັນຂ້າມ ແກ່ງເຈັກ ເປັນຈຸດປະທະແນວທີ 3 ບ້ານນາແປ, ເມືອງຄຳເກີດ, ເມືອງຄຳມ່ວນ, ແກ່ງເຈັກ ທີ່ສົງຜົນກະທົບທາງກົງຕໍ່ຊາວໄຊຍະບູລີຢ່າງຫຼວງຫຼາຍ ເພາະວ່າບໍລິເວນດັ່ງກ່າວເປັນເຂດເຊື່ອມຕໍ່ສະຫຍາມກັບຝຣັ່ງ ແລະ ຍັງເປັນເຂດສູ້ຮົບຂອງຝຣັ່ງ ຊຶ່ງປະກົດໃຫ້ເຫັນໃນແຜນທີ່ໝາຍເລກ 2 ການສູ້ຮົບໃນລາວ, ຜົນກະທົບທີ່ເກີດຂຶ້ນເຮັດໃຫ້ຝຣັ່ງຖືສິດທິເໜືອລຳນ້ຳຂອງ ດ້ວຍການຈັດເວນຍາມເຮືອລົບຂຶ້ນ-ລ່ອງທັງກາງເວນ ແລະກາງຄືນ ສ່ວນຝ່າຍຫວຽດນາມທີ່ບໍ່ຍອມແພ້ກໍ່ຍັງສູ້ຮົບກັບທະຫານຝຣັ່ງ ໄດ້ຂຶ້ນຝັ່ງທີ່ ບ້ານ ໄຊຍະບູລີ ເພື່ອຕິດຕາມ ທ່ານໂຮຈິມິນ ຜູ້ປົດປ່ອຍຫວຽດນາມໃນຂະນະນັ້ນຈຶ່ງເກີດມີການຕໍ່ສູ້ກັບທະຫານອາສາສະມັກຂອງໄທ ບໍລິເວນດັ່ງກ່າວຊາວບ້ານໄຊຍະບູລີເອີ້ນວ່າ: ຄຸ້ມວິລະຊົນ.



*ແຜນທີ່ການສູ້ຮົບໃນລາວ ( ສຸວິດ ທີຣະສາສວັດ 2543:196)*

ໃນສະໄໝພະບາດສົມເດັດ ພະຈຸລະຈອມເກົ້າເຈົ້າຢູ່ຫົວ ລັດຖະການທີ 5 (ພສ. 2411-2453) ຣສ. 126 (ພສ. 2540) ໄຊຍະບູລີ ເປັນເມືອງທີ່ຂຶ້ນກັບນະຄອນພະນົມ ໃນຂະນະທີ່ນະຄອນພະນົມຍັງຂຶ້ນກັບອຸດອນ ໂດຍມີເຈົ້າເມືອງປົກຄອງ ປະກອບດ້ວຍ 11 ເມືອງ ໄດ້ແກ່: 1) ນະຄອນພະນົມ, 2) ມຸກດາຫານ, 3) ໜອງສູງ, 4) ໄຊຍະບູລີ, 5) ທ່າອຸເທນ, 6) ເຣນູນະຄອນ, 7) ອາດສາມາດ, 8) ອາກາດອຳນວຍ, 9) ກຸສຸມານມົນທົນ, 10) ໂພທິໄພສານແລະ 11) ຣາມຣາຊ.

ຍຸກທີ 3 ພສ. 2450 ໄດ້ປະຕິຮູບການປົກຄອງຢ່າງເປັນລະບົບຄື ໃຫ້ມີບ້ານ, ຕາແສງ, ເມືອງແລະແຂວງ ເມືອງໄຊຍະບູລີຈຶ່ງໄດ້ຕັ້ງເປັນເມືອງ ຕໍ່ມາກໍ່ໄດ້ຍ້າຍຫ້ອງການປົກຄອງໄປຕັ້ງຢູ່ບຶງການ ແລະ

ໄດ້ປ່ຽນຊື່ເປັນ ເມືອງບຶງການ ແລະ ແຂວງບຶງການ ໃນປະຈຸບັນ, ສ່ວນບໍລິເວນປາກນ້ຳສົງຄາມຍັງເອີ້ນຊື່ບ້ານໄຊຍະບູລີ, ເມືອງທ່າອຸເທນ ແລະ ແຂວງນະຄອນພະນົມ.

ມາເຖິງປີ ພສ. 2523 ກົມຊົນລະປະທານໄດ້ວາງແນວທາງສຶກສາເບື້ອງຕົ້ນ ກ່ຽວກັບການພັດທະນາລຸ່ມນ້ຳສົງຄາມ ເພື່ອຫຼຸດຜ່ອນອຸທົກກະໄພຍ້ອນເກີດນ້ຳຖ້ວມໃນບໍລິເວນລຸ່ມນ້ຳສົງຄາມ ຈຶ່ງຕ້ອງໄດ້ສ້າງປະຕູລະບາຍນ້ຳບໍລິເວນປາກນ້ຳ ເພື່ອຄວບຄຸມນ້ຳທີ່ໄຫຼເຂົ້າ; ປີ ພສ. 2542 ນຳພາໂດຍ Mekong Secretariat ໄດ້ສຶກສາ ແລະ ກຳນົດຈຸດທີ່ຄາດວ່າຈະກໍ່ສ້າງເຂື່ອນເກັບນ້ຳຢູ່ຈຸດກາງບໍລິເວນຕົ້ນນ້ຳ ເພື່ອຫຼຸດຜ່ອນບັນຫານ້ຳຖ້ວມລວມເຖິງການສ້າງປະຕູເປີດ-ປິດປາກນ້ຳ ເພື່ອຄວບຄຸມປະລິມານນ້ຳ, ພສ. 2533 ກົມພັດທະນາ ແລະ ສົ່ງເສີມພະລັງງານ ໄດ້ນຳເອົາໂຄງການພັດທະນາລຸ່ມນ້ຳສົງຄາມ, ແຂວງສະກົນນະຄອນ, ນະຄອນພະນົມ, ໜອງຄາຍ, ອຸດອນທານີ ເພື່ອກັບມາຄົ້ນຄວ້າ ແລະ ສຶກສາຄວາມເໝາະສົມ ເພື່ອປ້ອງກັນນ້ຳຖ້ວມ ແລະ ພັດທະນາການກະເສດໃນລຸ່ມນ້ຳສົງຄາມ ດ້ວຍວາທະກຳນ້ຳຖ້ວມ ແລະ ວາທະກຳການພັດທະນາ ຈຶ່ງເຮັດໃຫ້ເຂດລຸ່ມນ້ຳສົງຄາມເປັນພື້ນທີ່ທີ່ປະສົບບັນຫາອຸທົກກະໄພທີ່ໄດ້ຮັບການແກ້ໄຂຈາກລັດຢ່າງຮີບດ່ວນ ຈຶ່ງເປັນຈຸດກຳເນີດຂອງການເຕົ້າໂຮມກັນຂອງຊຸມຊົນທີ່ໃນຂອບເຂດລຸ່ມນ້ຳສົງຄາມ ພະຍາຍາມອະທິບາຍໃຫ້ລັດທະບານເຂົ້າໃຈເຖິງລັກສະນະທາງກາຍະພາບຂອງພູມສັນຖານໃນເຂດດັ່ງກ່າວ ເພື່ອໃຫ້ມີການດຳເນີນນະໂຍບາຍການພັດທະນາພື້ນທີ່ໄດ້ຢ່າງເໝາະສົມ ຈົນເຮັດໃຫ້ເກີດໂຄງການອະນຸລັກລຸ່ມນ້ຳສົງຄາມຂຶ້ນມາ ເຖິງແນວໃດກໍ່ຕາມປະຈຸບັນລັດກຳລັງສ້າງຂໍ້ຕົກລົງກ່ຽວກັບໂຄງການກໍ່ສ້າງເຂື່ອນບໍລິເວນລຸ່ມນ້ຳແລະປະຕູເປີດ-ປິດນ້ຳສົງຄາມອີກເທື່ອໜຶ່ງ ເພື່ອຂໍຄຳຄິດເຫັນຈາກການລົງພາກສະໜາມຂອງຜູ້ວິໄຈ ໃນວັນທີ 1 ພຶດສະພາ 2559 ປະຊາຊົນໃນບ້ານໄຊຍະບຸລີ ກຳລັງລວມໂຕກັນເພື່ອຄັດຄ້ານໂຄງການດັ່ງກ່າວ.

ຈາກຂໍ້ມູນທາງປະຫວັດສາດທີ່ກ່າວມາຂ້າງເທິງ ນອກຈາກຈະເຮັດໃຫ້ເຫັນລຳດັບຂອງເຫດການ ແລະ ຫ້ວງເວລາແລ້ວ ເຫດການທາງປະຫວັດສາດກໍ່ເປັນປັດໃຈສຳຄັນທີ່ກະຕຸ້ນໃຫ້ບໍລິບົດທາງສັງຄົມມີການປ່ຽນແປງ ການຍົກຍ້າຍຜູ້ຄົນ; ດັ່ງນັ້ນ ພັດທະນາການ ແລະ ການປ່ຽນແປງຂອງຊຸມຊົນຈຶ່ງມີການພົວພັນກັບເຫດການສຳຄັນທາງປະຫວັດສາດຂອງຊາດ ແລະ ຄວາມເປັນມາຂອງທ້ອງຖິ່ນຢ່າງສະນິດແໜ້ນຕໍ່ກັບຂະບວນການສ້າງຄວາມໝາຍໃໝ່ທາງວັດທະນະທຳຜ່ານການເຄື່ອນໄຫວພິທີກຳ ແລະ ຄວາມເຊື່ອຂອງຊຸມຊົນ, ອຳນາດລັດຖະການ ແລະ ນະໂຍບາຍການປົກຄອງທ້ອງຖິ່ນທີ່ປະຕິບັດຕໍ່ຊຸມຊົນ ເມື່ອພົບກັບການປ່ຽນແປງ ຄົນໃນຊຸມຊົນຈຶ່ງມີການປັບໂຕ, ຕໍ່ສູ້, ຍາດແຍ້ງອິດສະລະພາບ ແລະ ການໃຊ້ຊີວິດ ດ້ວຍການສ້າງຄວາມໝາຍໃໝ່ທາງວັດທະນະທຳຜ່ານປະຕິບັດການທີ່ຫຼາກຫຼາຍ ພາຍໃຕ້ເງື່ອນໄຂການເຈລະຈາ ແລະ ການປ່ຽນແປງຄວາມ

ສຳພັນຮູບແບບອຳນາດ ປະຕິບັດການດັ່ງກ່າວເປັນຜົນຂອງການຕໍ່ສູ້ ແລະ ການຍາດແຍ້ງຂອງຄົນໃນຊຸມຊົນດ້ວຍກັນ, ລະຫວ່າງປະຊາຊົນກັບລັດ ໂດຍສຶກສາຜ່ານຄວາມເຊື່ອການນັບຖືຜີ ແລະ ນາງທຽມ ທີ່ສະແດງອອກດ້ວຍພິທີກຳພາຍໃຕ້ເງື່ອນໄຂບໍລິບົດຂອງສັງຄົມ ທີ່ມີການປ່ຽນແປງຊຸມຊົນເຂດຊາຍແດນ, ຂະບວນການສ້າງຄວາມໝາຍໃໝ່ທາງວັດທະນະທຳ , ພິທີກຳ, ການສະແດງອຳນາດຂອງບຸກຄົນ ຊ່ວຍຈັດລະບຽບຂອງຄົນ ແລະ ສັງຄົມ, ຊ່ວຍຈັດສັນຊັບພະຍາກອນ ແລະ ເປັນການເອື້ອຍອີງກັນໃຫ້ກັນລະຫວ່າງບຸກຄົນກັບລັດ, ຄົນກັບທຳມະຊາດ, ຄົນກັບຄົນ ໃນຂະນະດຽວກັນນັ້ນກໍ່ຍັງເປັນພື້ນທີ່ທີ່ໃຊ້ເປັນຂໍ້ອ້າງກັບອຳນາດຕ່າງໆ ພິທີກຳສະແດງອຳນາດຂອງບຸກຄົນຕໍ່ກັບສິ່ງອື່ນໆ ການສ້າງຄວາມເຂົ້າໃຈຄວາມໝາຍຂອງພິທີກຳຕໍ່ຜູ້ເຂົ້າຮ່ວມຈຶ່ງເຮັດໃຫ້ເຫັນໂລກກະທັດຂອງຜູ້ເຂົ້າຮ່ວມ ຊຶ່ງນຳໄປສູ່ການຕີລາຄາສັນຍະລັກ ແລະ ແປຄວາມໝາຍຂອງພິທີກຳ ທີ່ຊັບຊ້ອນຕະຫຼອດຈົນການນຳໄປສູ່ການພົວພັນກັນກັບພິທີກຳອື່ນໆຂອງຊຸມຊົນ.

ພິທີກຳບໍ່ພຽງແຕ່ເປັນການຈັດລະບຽບຂອງບຸກຄົນເທົ່ານັ້ນ ແຕ່ເປັນພິທີກຳເປັນເຄື່ອງມືສຳຄັນຂອງບຸກຄົນ ເພື່ອເປັນຂໍ້ອ້າງ ແລະ ສົ່ງເສີມອຳນາດຫຼາຍລະດັບໄດ້ແກ່: ອຳນາດລັດຖະການ, ທ້ອງຖິ່ນ, ອຳນາດຂອງທຳມະຊາດ, ອຳນາດຂອງສາສະໜາ ແລະ ອຳນາດຂອງຜີນຳກັນອີກດ້ວຍ.

## ສະຫຼຸບ

ເພື່ອສຶກສາຂະບວນການສ້າງຄວາມໝາຍໃໝ່ທາງວັດທະນະທຳ ຜ່ານຂະບວນການທາງພິທີກຳ ແລະ ຄວາມເຊື່ອໃນຊຸມຊົນ ເຂດໄຊຍະບູລີ, ເມືອງທ່າອຸເທນ, ແຂວງນະຄອນພະນົມ ຜົນການສຶກສາພົບວ່າ: ການເຄື່ອນໄຫວພິທີກຳ ແລະ ຄວາມເຊື່ອໃຊ້ຊຸມຊົນ, ການເຄື່ອນຍ້າຍຄົນ, ພັດທະນາການ ແລະ ການປ່ຽນແປງຂອງຊຸມຊົນມີຄວາມກ່ຽວຂ້ອງກັນກັບເຫດການທີ່ສຳຄັນທາງປະຫວັດສາດຂອງຊາດ ແລະ ປະຫວັດຄວາມເປັນມາຂອງທ້ອງຖິ່ນ ອຳນາດຂອງລັດຖະການ ແລະ ນະໂຍບາຍຕໍ່ທ້ອງຖິ່ນທີ່ປະຕິບັດຕໍ່ຊຸມຊົນ ເມື່ອພົບກັບການປ່ຽນແປງ ຄົນໃນຊຸມຊົນຕໍ່ມີການປັບໂຕ, ຕໍ່ສູ້, ຍາດແຍ້ງເອົາຄວາມໝາຍ ແລະ ການດຳລົງຊີວິດ ດ້ວຍການຜະຫຼິດຄວາມໝາຍໃໝ່ທາງວັດທະນະທຳຜ່ານປະຕິບັດການທາງວັດທະນະທຳທີ່ຫຼາກຫຼາຍ ພາຍໃຕ້ເງື່ອນໄຂການຕໍ່ສູ້ ແລະ ການປ່ຽນແປງຄວາມສຳພັນແບບອຳນາດ ການນຳໃຊ້ພື້ນທີ່ພິທີກຳເພື່ອຍາດແຍ້ງຊັບພະຍາກອນຂອງຄົນໃນຊຸມຊົນ ແລະ ໃຊ້ເປັນຂໍ້ອ້າງກັບນະໂຍບາຍຂອງລັດທີ່ເຂົ້າມາຈັດການຊຸມຊົນເພື່ອພັດທະນາໃຫ້ເປັນແຫຼ່ງທ່ອງທ່ຽວ ຊຶ່ງເຮັດໃຫ້ຊາວບ້ານຂາດສິດທິໃນການນຳໃຊ້ຊັບພະຍາກອນທີ່ເປັນຂອງສາທາລະນະ.

## ຜົນຂອງການວິໄຈ

1. ການວິໄຈນີ້ສະທ້ອນໃຫ້ເຫັນຄວາມຊັບຊ້ອນ ແລະ ເຊື່ອມໂຍງຂອງວັດທະນະທຳ ຄວາມເຊື່ອ ແລະ ຂະບວນການຂອງອຳນາດທາງສິນທຳຂອງຊຸມຊົນ

ອີສານ ໂດຍໃຊ້ກໍລະນີສຶກສາຊຸມຊົນ ໄຊຍະບູລີ, ເມືອງທ່າອຸເທນ, ແຂວງນະຄອນພະນົມ ໄດ້ນໍາໄປສູ່ການສະເໜີຂະບວນການສ້າງຄວາມຮູ້ຊຸມຊົນທີ່ມີການປ່ຽນແປງໃນຍຸກໂລກາວິວັດ;

2. ຂໍ້ມູນທີ່ໄດ້ຈາກການສຶກສາຈະເປັນສ່ວນໜຶ່ງທີ່ເຮັດໃຫ້ເກີດການຍອມຮັບໃນເລື່ອງຂອງຄວາມຫຼາກຫຼາຍທາງວັດທະນະທໍາຄວາມເຊື່ອຖືເຂດຊາຍແດນ ແລະ ລັດສາມາດນໍາໄປໃຊ້ປະໂຫຍດ ໃນການສ້າງຄວາມເຂົ້າໃຈວັດທະນະທໍາຊຸມຊົນເພື່ອການພັດທະນາທີ່ຍືນຍົງ.

## ເອກະສານອ້າງອີງ


ໄຊຍັນ ວັດທະນະພູຕິ. (2555). " '**ຄົນເມືອງ**' : **ຕົວຕົນການຜະລິດຊໍ້າສ້າງໃໝ່ ແລະ ພື້ນທີ່ທາງສັງຄົມ ຂອງຄົນເມືອງ**" ໂຕຕົວຄົນເມືອງ 100 ປີ ຊາຕການ ໄກຣສຣີ ນິມມານເໜິນ. 75, 75-122.

ຊິເກຣາຣຸ ທານາເບ. (2555). **ພິທີກໍາ ແລະ ການປະຕິບັດໃນສັງຄົມຊາວນາພາກເໜືອຂອງປະເທດໄທ**. ຊຽງໃໝ່: ສູນການສຶກຊົນເຜົ່າ ແລະ ການພັດທະນາ ຄະນະສັງຄົມສາດ, ມະຫາວິທະຍາໄລຊຽງໃໝ່.

ໄຊຮັດ ຈະເລີນສິນໂອລານ. (2542). **ວາທະກໍາການພັດທະນາ: ອໍານາດຄວາມຮູ້, ຄວາມເປັນຈິງ, ເອກະລັກ ແລະ ຄວາມເປັນອື່ນ**. ກຣຸງເທບ: ວິພາສາ.

ດາລາລັດ ເມດຕາຣີການົນ. (2548). **ປະຫວັດສາດທ້ອງຖິ່ນ.** ຂອນແກ່ນ: ຄະນະມະນຸດສາດ ແລະ ສັງຄົມສາດ ມະຫາວິທະຍາໄລຂອນແກ່ນ.

ເຕີມ ວິພາກພົດຈະນະກິດ. (2542). **ປະຫວັດສາດອີສານ** (ພິມຄັ້ງທີ 3). ກຣຸງເທບ : ມູນລະນິທິໂຄງການປື້ມຕໍາລາ. ສັງຄົມສາດ ແລະ ມະນຸດສາດ.

ປະຖົມ ທົ່ງສຸວັນ. (2550). **ເລື່ອງເລົ່າ: ວ່າດ້ວຍຕໍານານກັບວັດທະນະທໍາ.** ກຣຸງເທບ. ສໍານັກພິມແຫ່ງຈຸລາລົງກອນມະຫາວິທະຍາໄລ.

ປິ່ນແກ້ວ ເຫຼືອງອະຮ່າມສີ. (2548) ເ**ຂ້າມຊາຍແດນກັບຄໍາຖາມເລື່ອງອັດຕະລັກ, ວັດທະນະທໍາພື້ນທີ່ ແລະ ຄວາມເປັນຊາດ**ເ ໃນສັງຄົມສາດ. ຊຽງໃໝ່: ນົບບູລີການພິມ.

___________. ອັດຕະລັກ **ເຊື້ອຊາດ ແລະ ຄົນທີ່ສັງຄົມປະລະ.** ກຣຸງເທບ: ນົບບູລີການພິມ, 2546.

ສິນລະປະກໍາ, ກົມ. (2516). ພົງສາວະດານເມືອງອີສານ. ປະຊຸມພົງສາວະດານ ເຫຼັ້ມທີ 3. ກຣຸງເທບ: ສຶກສາພັນພານິດ.

ພິເຊດ ສາຍພັນ. (2542). ເ**ນາຄາຄະຕິ: ການສຶກສາຊີວິດວັດທະນະທໍາຈາກພິທີກໍາຮ່ວມສະໄໝ.** ວິທະຍານິພົນສິລະປະສາດມະຫາບັນດິດ, ສາຂາວິຊາມະນຸດວິທະຍາ, ມະຫາວິທະຍາໄລທໍາມະສາດ.

ມາລີນີ ກຣາງປະພັນ. (2555). **ເຄືອຈ່າຍທາງສັງຄົມ ຂ້າໂອກາດພຣະທາດພະນົມ ໃນຊຸມຊົນຝັ່ງຂອງ.** ດຸສະດີນິພົນປັດສະຍາດຸສະດີບັນດິດ, ສາຂາວິຊາ ພາສາໄທ, ບັນດິດວິທະຍາໄລ, ມະຫາວິທະຍາໄລມະຫາສາລະຄາມ.

ໂຢຊິຢູກິ ມາຊູຮາຮາ. (2551). **ປະຫວັດສາດເສດຖະກິດຂອງຣາຊະອານາຈັກລ້ານຊ້າງ.** ກຣຸງເທບ: ມະຕິຊົນ.

ສີສັກ ວັນຣິໂພດົມ. (2551) **ຄູ່ມືຊຸກຄິດຄວາມໝາຍຂອງພູມວັດທະນະທຳການສຶກສາຈາກພາຍໃນ ແລະ ສຳນຶກຂອງທ່ອງຖິ່ນ.** ກຣຸງເທບ: ມູນລະນິທິເລັກ-ປະໄພ ວິຣິຍະພັນ.

________________. "ການສຶກສາພົນກະທົບດ້ານບູຮານະຄະດີ ສິລະປະ ແລະ ວັດທະນະທຳ ໂຄງການນ້ຳສົ່ງຄາມ". (2538). ພາກວິຊາມະນຸດວິທະຍາ, ຄະນະບູຮານະຄະດີ, ມະຫາວິທະຍາໄລສິລະປະກອນ.

________________. **ເມືອງໜອງຫານຫຼວງ ແລະ ພູພານົມຫາວນາສີ.** (2556). ພິມຄັ້ງທີ 2. ກຣຸງເທບ: ມູນລະນິທິເລັກປະໄພວິທະຍານິພົນ.

________________. **ແອ່ງອາຣິຍະທຳອີສານ.** (2543). ພິມຄັ້ງທີ 3. ກຣຸງເທບ: ມະຕິຊົນ.

ສະສິທອນ ອ່ອນເຫຼົາ. (2553). **ການຈັດກຸ່ມພາສາຕະກຸນໄທໃນລຸ່ມນ້ຳພາວ, ເມືອງຄຳເກີດ, ແຂວງບໍລິຄຳໄຊ. ສປປ ລາວ.** ວິທະຍານິພົນສິລະປະສາດມະຫາບັນດິດ, ສາຂາວິຊາພາສາລາວ, ບັນດິດວິທະຍາໄລ, ມະຫາວິທະຍາໄລມະຫາສາລະຄາມ.

ສົບສັນ ເພັດຄຳ. (2554). **ລວງລຸ່ມນ້ຳຂອງ: ພື້ນທີ່ທາງເສດກິດ ແລະ ສັງຄົມຂອງຊຸມຊົນເຂດຊາຍແດນໄທ-ລາວ.** ດຸສະດີນິພົນປັສະຍາດຸສະດີບັນດິດ, ສາຂາວິຊາພາສາໄທສຶກສາ, ບັນດິດວິທະຍາໄລ, ມະຫາວິທະຍາໄລມະຫາສາລະຄາມ.

ລີລາ ວິລະວົງ. ( 2539). **ປະຫວັດສາດລາວ.** ພິມຄັ້ງທີ 2. ກຣຸງເທບ: ມະຕິຊົນ.

ສຸວັນນາ ກຽງໄກເພັດ. (2552). **ມະນຸດວິທະຍາປະທະວັດທະນະທຳສຶກສາ ລວມບົດຄວາມຈາກການປະຊຸມປະຈຳປີ** ມະນຸດວິທະຍາຄັ້ງທີ 7 ຍົກເຄື່ອງເລື່ອງວັດທະນະທຳສຶກສາ. ກຣຸງເທບ: ສູນມະນຸດວິທະຍາສິຣິນທອນ.

ສຸວິດ ທີຣສາສວັດ. (2543). **ປະຫວັດສາດລາວ** 1779-1975. ກຣຸງເທບ: ໂຣງພິມພີຣະການພິມ.

________________. (2552). **ຈັກຣວັນດີນິຍົມເໜືອແມ່ນ້ຳຂອງ.** ກຣຸງເທບ: ມະຕິຊົນ.

ອະຄິນ ຣະພີພັດ.(2551). **ວັດທະນະທຳຄືຄວາມໝາຍ: ທິດສະດີ ແລະ ວິທີການຂອງຄຣິຟຟອດເກຍ.** ກຣຸງເທບ: ສູນມະນຸດວິທະຍາສິຣິນທອນ (ອົງການມະຫາຊົນ)

ອານັນ ການນະພັນ. 2544. **ວິທີຄິດຊັບຊ້ອນ ໃນການວິໄຈຊຸມຊົນ: ຂະບວນ ການ ແລະ ສັກກາຍພາບຂອງ ຊຸມຊົນໃນການພັດທະນາ.** ກຣຸງ ເທບ: ສຳນັກງານກອງທຶນສະໜັບ ສະໜູນການວິໄຈ.

_____________. 2552. “**ຄວາມເຂົ້າໃຈ “ວັດທະນະທຳ” ໃນບົດວິໄຈສັງຄົມໄທ**”. **ມະນຸດວິທະຍາປະທະວັດທະນະທຳ ສຶກສາ, ລວມບົດຄວາມຈາກການ ປະຊຸມປະຈຳປີ, ມະນຸດວິທະຍາ ຄັ້ງທີ 7 ຍົກເຄື່ອງເລື່ອງວັດທະນະ ທຳສຶກສາ.** 11-121. ຊຽງໃໝ່: ພາກວິຊາສັງຄົມວິທະຍາ ແລະ ມະນຸດວິທະຍາ, ຄະນະສັງຄົມສາດ , ມະຫາວິທະຍາໄລຊຽງໃໝ່.

_____________. 2555. **ເຈົ້າທີ່ ແລະ ຜີປູ່ຍ່າ ອົງຄວາມຮູ້ຊາວບ້ານ, ອຳນາດ ແລະ ໂຕຕົນຂອງຄົນທ່ອງຖິ່ນ.** ຊຽງໃໝ່: ພາກວິຊາສັງຄົມວິທະຍາ ແລະ ມະນຸດວິທະຍາ, ຄະນະ ສັງຄົມສາດ, ມະຫາວິທະຍາໄລ ຊຽງໃໝ່.

ອະທິຣາຊ ນັນຂັນຕີ. 2557. **ການນັບຖືຜີຂອງ ຊາວໄທຍໍ້: ຄວາມສຳພັນດ້ານ ຄວາມເຊື່ອ ແລະ ນິເວດວິທະຍາ, ວັດທະນະທຳ** ດຸສະດີນິພົນປັດສະ ຍາດຸສະດີບັນດິດ, ສາຂາໄທສຶກ ສາ, ບັນດິດວິທະຍາໄລ, ມະຫາວິທະຍາໄລບູຣະພາ.

Evans, Grant. **The Politics of Ritual and Remembrance Laos since 1975.** Chiang Mai : Silk Worm Books, 1998.

Kapferer, Bruce. **Ritual Dynamics and Virtual Practice Beyond Representation and Meaning.** Social Analysis, Volume 48, Issue 2, Summer 2004, 35-54.

Keyes, Charles F. **Personal communication.** October 1, 2005

Lefebrve, Henri. 1991. The Production of Space. Malden, Massachusettes : Blackwell Publishers. (Translated by Donald Nicholson-Smith).